ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ອົງການປະກັນສັງຄົມແຫ່ງຊາດ

ເລກທີ 0886/ອປສ
ນະຄອນຫລວງວຽງຈັນ,ວັນທີ 04.03.2026.

## ໜັງສືແຈ້ງເຊີນປະມູນ

1. ອົງການປະກັນສັງຄົມແຫ່ງຊາດ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເຫມາະສົມ ເຂົ້າຍື່ນຊອງປະມູນ ສໍາລັບສະຫນອງ ສິ່ງພິມ ເພື່ອການໂຄສະນາ (ເສື້ອຍືດ, ຜ້າກັນເປື້ອນ ແລະ ໂພດເຕີ). ຊຶ່ງກໍານົດການມອບຮັບສິນຄ້າພາຍໃນ 30 ວັນ ພາຍຫລັງຜູ້ຈັດຊື້ອອກເອກະສານສັ່ງຊື້;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ແລະ ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງເຄື່ອງດັ່ງກ່າວ;
4. ບໍລິສັດໃດສົນໃຈ ສາມາດຊື້ເອກະສານປະມູນຄົບຊຸດໄດ້ທີ່ອົງການປະກັນສັງຄົມແຫ່ງຊາດ (ພະແນກ ນິຕິກໍາ) ຊັ້ນ 05 ຕັ້ງຢູ່ບ້ານ: ທົ່ງສາງນາງ, ເມືອງ: ຈັນທະບູລີ, ນະຄອນຫລວງວຽງຈັນ, ເບີໂທ 020 59939598. ຈະເລີ່ມຂາຍຊອງແຕ່ວັນທີ 04 ມີນາ 2026 ເປັນຕົ້ນໄປ, ໃນລາຄາ 1,000,000 ກີບ/ຊອງ (ໜຶ່ງລ້ານກີບ), ຈໍານວນເງິນດັ່ງກ່າວຈະບໍ່ສົ່ງຄືນຖ້າບໍລິສັດຂອງທ່ານບໍ່ຊະນະການປະມູນ ແລະ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ.
5. ຊອງປະມູນຕ້ອງສົ່ງກ່ອນເວລາກໍານົດເປີດຊອງປະມູນ ທີ່ຫ້ອງປະຊຸມຊັ້ນ 2 ຂອງອົງການປະກັນສັງຄົມແຫ່ງຊາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 09:00 ໂມງຂອງວັນທີ 08 ເມສາ 2026 ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄໍ້າປະກັນການປະມູນ ດ້ວຍເງິນສົດ ຫລື ໜັງສືຄໍ້າປະກັນອອກໂດຍທະນາຄານ, ແຊັກ ບໍ່ໃຫ້ຫລຸດ 02% (ສອງສ່ວນຮ້ອຍ) ຂອງມູນຄ່າສະເໜີ.

ເຊັນ - ຫົວໜ້າອົງການ

ບົວທອນ ພົມມະຈັນ

สแกนด้วย CamScanner